ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມພາສີ
ເລກທີ 015940
08 OCT 2018

ກະຊວງການເງິນ

ເລກທີ 2819 /ກງ
ລົງວັນທີ 05 ກັນຍາ 2018

## ຄຳແນະນຳຂອງກະຊວງການເງິນ
## ກ່ຽວກັບການສະສາງໃບແຈ້ງພາສີຄ້ຳປະກັນ ຂອງວິສະຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການຈັດຕັ້ງລັດ ແລະ ສາກົນ

---

- ອີງຕາມ ກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ: 08/05/2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມແຈ້ງການກະຊວງການເງິນ ສະບັບເລກທີ 0420/ກງ, ລົງວັນທີ 14 ກຸມພາ 2018 ວ່າດ້ວຍຂັ້ນຕອນການດຳເນີນເອກະສານຂໍອະນຸມັດນຳເຂົ້າສິນຄ້າ, ເຄື່ອງຂອງ ໄດ້ຍົກເວັ້ນພາສີ-ອາກອນນຳເຂົ້າສຳລັບໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ;
- ອີງຕາມ ໜັງສືສະເໜີຂອງກົມພາສີ, ສະບັບເລກທີ: 04369/ກພສ, ລົງວັນທີ: 16 ສິງຫາ 2018.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນອອກຄຳແນະນຳ ດັ່ງນີ້:**

1. ຈຸດປະສົງຂອງຄຳແນະນຳສະບັບນີ້ ເພື່ອຈັດຕັ້ງຜັນຂະຫຍາຍ ມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ກ່ຽວກັບການຄ້ຳປະກັນເພື່ອນຳເອົາສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ ຫຼື ສາງ, ແນໃສ່ເພື່ອກຳນົດຫຼັກການ ແລະ ມາດຕະການໃນການຄຸ້ມຄອງ, ສະສາງໃບແຈ້ງພາສີຄ້ຳປະກັນ ທີ່ໄດ້ອະນຸຍາດໃຫ້ສິນຄ້າ, ເຄື່ອງຂອງ ຂອງວິສະຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການຈັດຕັ້ງລັດ ແລະ ສາກົນ ອອກກ່ອນດ້ວຍການຄ້ຳປະກັນຕາມກົດໝາຍ.

2. ສິນຄ້າ, ເຄື່ອງຂອງ ຂອງບັນດາວິສະຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການຈັດຕັ້ງລັດ ແລະ ສາກົນ, ເປັນຕົ້ນ ປະເພດວັດຖຸອຸປະກອນ, ພາຫະນະ, ກົນຈັກໜັກ ແລະ ອື່ນໆ, ໃນກໍລະນີ ທີ່ແຜນນຳເຂົ້າປະຈຳປີ ຫຼື ຂໍ້ຕົກລົງກ່ຽວກັບການຍົກເວັ້ນ, ງົດເກັບ ແລະ ຫຼຸດຜ່ອນຄ່າພາສີ-ອາກອນ ຍັງບໍ່ທັນຖືກອະນຸມັດຈາກຂະແໜງການລັດທີ່ກ່ຽວຂ້ອງ ຕາມລະບຽບການ, ແຕ່ມີຄວາມຕ້ອງການຮີບດ່ວນ ເພື່ອນຳເຂົ້າມາຮັບໃຊ້ວິສະຫະກິດ, ໂຄງການ ຫຼື ອົງການຈັດຕັ້ງດັ່ງກ່າວຕ້ອງໄດ້ປະຕິບັດຕາມຂັ້ນຕອນການຄ້ຳປະກັນ ແລະ ປະກອບໃບແຈ້ງພາສີຄ້ຳປະກັນ ທີ່ດ່ານພາສີຊາຍແດນບ່ອນນຳເຂົ້າ ຕາມທີ່ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ຢ່າງເຂັ້ມງວດ.

3. ການສະສາງໃບແຈ້ງພາສີຄ້ຳປະກັນ ຂອງບັນດາວິສະຫະກິດ, ໂຄງການ ແລະ ອົງການຈັດຕັ້ງດັ່ງກ່າວ ຕ້ອງໄດ້ປະກອບໃບແຈ້ງພາສີເປັນລາຍລະອຽດ ພາຍໃນກຳນົດເວລາ 15 ວັນລັດຖະການ ນັບແຕ່ມື້ທີ່ແຜນນຳເຂົ້າປະ

ຈໍາປີ ຫຼື ຂໍ້ຕົກລົງທີ່ກ່ຽວຂ້ອງກັບການຍົກເວັ້ນ, ງົດເກັບ ແລະ ຫຼຸດຜ່ອນຄ່າພາສີ-ອາກອນ ໄດ້ຖືກອະນຸມັດຈາກຂະແໜງການລັດທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ. ຖ້າກາຍກໍານົດເວລາດັ່ງກ່າວ ຕ້ອງຖືກປັບໄໝເທົ່າກັບ 0,10% ຂອງມູນຄ່າສິນຄ້າ, ເຄື່ອງຂອງ ທີ່ໄດ້ກໍານົດໄວ້ໃນມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ຢ່າງເຂັ້ມງວດ.

4. ສໍາລັບການປະກອບເອກະສານໃບແຈ້ງພາສີເປັນລາຍລະອຽດ ເພື່ອສະສາງໃບແຈ້ງພາສີຄໍ້າປະກັນສິນຄ້າ, ເຄື່ອງຂອງ ຂອງບັນດາວິສະຫະກິດນໍາເຂົ້າ-ສົ່ງອອກ ແລະ ອື່ນໆ ທີ່ບໍ່ຕິດພັນກັບການຄົ້ນຄວ້າຮັບຮອງແຜນນໍາເຂົ້າປະຈໍາປີ ຫຼື ຂໍ້ຕົກລົງທີ່ກ່ຽວຂ້ອງ ແມ່ນໃຫ້ປະຕິບັດ ນັບແຕ່ມື້ທີ່ໄດ້ນໍາເອົາສິນຄ້າ, ເຄື່ອງຂອງອອກຈາກດ່ານພາສີ ຫຼື ສາງ ພາຍໃນກໍານົດເວລາ 15 ວັນລັດຖະການ. ຖ້າກາຍກໍານົດເວລາດັ່ງກ່າວ ຕ້ອງຖືກປັບໄໝເທົ່າກັບ 0,10% ຂອງມູນຄ່າສິນຄ້າ, ເຄື່ອງຂອງ ຕາມມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ຢ່າງເຂັ້ມງວດ.

5. ບັນດາວິສະຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ, ໂຄງການທີ່ນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ອົງການຈັດຕັ້ງລັດ ແລະ ສາກົນ ຕ້ອງເອົາໃຈໃສ່ ປະສານພົວພັນກັບຂະແໜງການລັດທີ່ກ່ຽວຂ້ອງ ເພື່ອໃຫ້ການຄົ້ນຄວ້າຮັບຮອງແຜນນໍາເຂົ້າປະຈໍາປີ ຫຼື ຂໍ້ຕົກລົງກ່ຽວກັບການຍົກເວັ້ນ, ງົດເກັບ ຫຼື ຫຼຸດຜ່ອນຄ່າພາສີ-ອາກອນ ໃຫ້ຖືກອະນຸມັດຕາມກົດໝາຍ ແລະ ລະບຽບການ ສໍາເລັດໂດຍໄວ.

6. ມອບໃຫ້ດ່ານພາສີຊາຍແດນ, ກອງຄຸ້ມຄອງພາສີ ບ່ອນສິນຄ້ານໍາເຂົ້າ ຕ້ອງໄດ້ຕິດຕາມ, ກວດກາ ແລະ ເລັ່ງທວງໃຫ້ຜູ້ແຈ້ງພາສີ ມາປະກອບໃບແຈ້ງພາສີເປັນລາຍລະອຽດ ຕາມລະບຽບການກໍານົດໄວ້. ຖ້າຊັກຊ້າກາຍກໍານົດເວລາທີ່ໄດ້ກໍານົດໄວ້ໃນແຕ່ລະກໍລະນີ ໃຫ້ດໍາເນີນການປັບໄໝ ຕາມມາດຕາ 27 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ຢ່າງເຂັ້ມງວດ.

7. ມອບໃຫ້ກົມພາສີ, ກົມນະໂຍບາຍການເງິນ ແລະ ນິຕິກໍາ, ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກົມສ່ວຍສາອາກອນ, ຫ້ອງການກະຊວງການເງິນ ແລະ ພາກສ່ວນລັດທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ເນື້ອໃນຄໍາແນະນໍາສະບັບນີ້ ໃຫ້ບັນດາວິສະຫະກິດ, ໂຄງການ ແລະ ອົງການຈັດຕັ້ງກ່ຽວຂ້ອງເຊື່ອມຊຶມ ແລະ ເຂົ້າໃຈ ເພື່ອພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

8. ຄໍາແນະນໍາ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ

ບ່ອນສົ່ງ :

| | | |
|---|---|---|
| - | ນາຍົກ, ຮອງນາຍົກລັດຖະມົນຕີ | 01 ສະບັບ "ເພື່ອຊາບ" |
| - | ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ | 01 ສະບັບ "ເພື່ອຊາບ" |
| - | ກະຊວງແຜນການ ແລະ ການລົງທຶນ | 01 ສະບັບ "ເພື່ອຊາບ" |
| - | ກະຊວງໂຍທາທິການ ແລະ ຂົນສົ່ງ | 01 ສະບັບ "ເພື່ອຊາບ" |
| - | ກະຊວງພະລັງງານ ແລະ ບໍ່ແຮ່ | 01 ສະບັບ "ເພື່ອຊາບ" |
| - | ກະຊວງອຸດສະຫະກໍາ ແລະ ການຄ້າ | 01 ສະບັບ "ເພື່ອຊາບ" |
| - | ບັນດາກົມອ້ອມຂ້າງກະຊວງການເງິນ | 01 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - | ບັນດາໂຄງການຕ່າງໆ | 01 ສະບັບ "ເພື່ອຈັດຕັ້ງປະຕິບັດ" |
| - | ສໍາເນົາເກັບໄວ້ | 01 ສະບັບ |